ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 153 /ນຍ

ວຽງຈັນ, ວັນທີ 25-07-2001

# ດຳລັດ

## ວ່າດ້ວຍການສ້າງຕັ້ງ

## ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ

---

- ອີງຕາມ ລັດຖະທຳມະນູນແຫ່ງ ສ ປປ ລາວ.
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ ປປ ລາວ ສະບັບເລກທີ 01/96 ສພຊ, ລົງວັນທີ 8 ມີນາ 1995.
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2068 ຮສສ, ລົງວັນທີ 17 ກໍລະກົດ 2000 ແລະການເຫັນດີຂອງ ກອງປະຊຸມນາຍົກ - ຮອງນາຍົກລັດຖະມົນຕີ, ລົງວັນທີ 14 ມິຖຸນາ 2001.

## ນາຍົກລັດຖະມົນຕີ ອອກດຳລັດ:

<u>ມາດຕາ1</u> : ຈຸດປະສົງ ຂອງການ ສ້າງຕັ້ງ ຄະນະກຳມະການແຫ່ງຊາດເພື່ອຜູ້ອາຍຸສູງ

1.1. ເພື່ອຜັນຂະຫຍາຍແນວທາງນະໂຍບາຍອັນເປັນທຳຂອງພັກແລະລັດຖະບານທີ່ມີຕໍ່ຜູ້ອາຍຸສູງໃຫ້ໄດ້ຮັບການວາງແຜນ,ເກັບກຳຂໍ້ມູນແລະປະສານການດຳເນີນງານຢ່າງເປັນລະບົບໃນທິດທາງດຽວກັນ.

1.2. ເພື່ອປຸກລະດົມ ແລະ ຊຸກຍູ້ໃຫ້ຄອບຄົວແລະສັງຄົມເອົາໃຈໃສ່ໃນການຊ່ວຍເຫລືອ ແລະ ດູແລຜູ້ອາຍຸສູງ.

1.3. ເພື່ອປຸກລະດົມ ແລະ ຊຸກຍູ້ໃຫ້ອົງການພາກລັດ ແລະ ເອກະຊົນທີ່ກ່ຽວຂ້ອງລວມທັງຊຸມຊົນເຂົ້າມາມີສ່ວນຊ່ວຍເຫລືອດູແລຜູ້ອາຍຸສູງ ໃນຮູບແບບຕ່າງໆເຊັ່ນ :ການຈັດສະຫວັດດີການຊຸມຊົນດູແລຜູ້ອາຍຸສູງ, ການຈັດສະຖານທີ່ອອກກຳລັງກາຍ ແລະ ພັກຜ່ອນຢ່ອນໃຈ, ການເຜີຍແຜ່ຂໍ້ມູນຂ່າວສານ ທີ່ເປັນປະໂຫຍດຕໍ່ການດຳລົງຊີວິດຂອງຜູ້ອາຍຸສູງ.

**ມາດຕາ 2** : ວ່າດ້ວຍນິຍາມ "ຜູ້ອາຍຸສູງ"

ຜູ້ອາຍຸສູງ ແມ່ນພົນລະເມືອງລາວ ທີ່ມີອາຍຸນັບແຕ່ 60 ປີຂື້ນໄປ, ຊຶ່ງມີຈິດໃຈຮັກຊາດ ແລະ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ.

**ມາດຕາ 3** : ວ່າດ້ວຍໂຄງປະກອບຂອງຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ.

3.1. ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ຊຶ່ງມາຈາກພາກສ່ວນກ່ຽວຂ້ອງຄື :

1. ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ,
2. ກຳມະການປະຈຳສູນກາງແນວລາວ ສ້າງຊາດ ເປັນຮອງປະທານ,
3. ຜູ້ຕາງໜ້າສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ,
4. ຜູ້ຕາງໜ້າ ກະຊວງສາທາລະນະສຸກ ເປັນກຳມະການ,
5. ຫົວໜ້າກົມນະໂຍບາຍບຳນານ ແລະ ຜູ້ອາຍຸສູງ ເປັນກຳມະການ.

3.2. ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ມີກອງເລຂາຂອງຕົນ ສັງກັດໃນກົງຈັກຂອງກົມນະໂຍບາຍບຳນານ ແລະ ຜູ້ອາຍຸສູງ, (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ).

3.3. ສຳລັບຢູ່ຂັ້ນທ້ອງຖິ່ນໃຫ້ດຳເນີນການຈັດຕັ້ງ ຄະນະຮັບຜິດຊອບວຽກງານຜູ້ອາຍຸສູງ ໂດຍເອົາພະແນກແຮງງານ ແລະ ສະຫວັດດີການສັງຄົມ ປະຈຳທ້ອງຖິ່ນນັ້ນ ເປັນໃຈກາງໃນການປະສານງານ.

3.4. ອົງການຈັດຕັ້ງເອກະຊົນ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ວຽກງານຜູ້ອາຍຸສູງແມ່ນສະເໜີ ໃຫ້ ປະສານງານກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕາມລະບຽບການ.

**ມາດຕາ4** : ວ່າດ້ວຍພາລະບົດບາດ ແລະ ໜ້າທີ່ຂອງຄະນະກຳມະການແຫ່ງຊາດເພື່ອຜູ້ອາຍຸສູງ.

ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ມີພາລະບົດບາດໜ້າທີ່ດັ່ງນີ້ :

4.1.ເປັນຜູ້ຊ່ວຍລັດຖະບານ (ລັດຖະມົນຕີວ່າການກະຊວງແຮງງານແລະສະຫວັດດີການສັງຄົມ) ໃນການປະສານງານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງກັບການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຜູ້ອາຍຸສູງ;

4.2. ດຳເນີນການຄົ້ນຄວ້ານະໂຍບາຍ,ຂໍ້ກຳນົດແລະລະບຽບການຕ່າງໆກ່ຽວກັບການຈັດຕັ້ງແລະ ເຄື່ອນໄຫວ ວຽກງານຜູ້ອາຍຸສູງ;

4.3. ລະດົມ ແລະ ຄຸ້ມຄອງທຶນ ທີ່ໄດ້ຮັບການສະໜັບສະໜູນຈາກພາຍໃນ, ການຊ່ວຍເຫລືອ ຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນອື່ນໆ.

**ມາດຕາ 5** : ວ່າດ້ວຍລະບອບ ແລະ ແບບແຜນວິທີເຮັດວຽກ.

ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ດຳເນີນການເຄື່ອນໄຫວວຽກງານຕາມຫຼັກການ ລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ແລະ ບຸກຄົນຮັບຜິດຊອບ, ປະຕິບັດລະບອບປະຊຸມ ແລະ ລາຍງານເປັນປົກກະຕິ ເພື່ອສະຫລຸບຕີລາຄາຜົນສຳເລັດ ແລະ ວາງແຜນດຳເນີນງານ ຂອງຕົນໃນແຕ່ລະໄລຍະ.

**ມາດຕາ 6** : ວ່າດ້ວຍແຫລ່ງທຶນສຳລັບການເຄື່ອນໄຫວວຽກງານຜູ້ອາຍຸສູງ.

ແຫລ່ງທຶນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວ ວຽກງານຜູ້ອາຍຸສູງ ແມ່ນໄດ້ມາຈາກການປະກອບສ່ວນຂອງ ຊຸມຊົນ ແລະ ສັງຄົມ, ການຊ່ວຍເຫລືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງເອກະຊົນ ແລະ ອື່ນໆ.

**ມາດຕາ 7** : ຂໍ້ບັນຍັດສຸດທ້າຍ.

7.1. ມອບໃຫ້ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ປະສານສົມທົບ ກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

7.2. ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ່ ໄດ້ລົງລາຍເຊັນເປັນຕົ້ນໄປ.

ທ. ລັດຖະບານແຫ່ງ ສ ປ ປ ລາວ,

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ